# ກາມທະນາຍຄວາມ

# ASK A LAWYER

by Attorney Into CHAMPON

ໂດຍ : ທະນາຍຄວາມ ອິນໂຕ ຈຳພັນ



**<u>Question #1</u>:** My insurer Mercury Insurance sues me to recover the medical payment which it made to the doctor who treated me for my injuries resulting from an automobile accident in California two years ago. The Laotian man who claimed to be the head of the law office told me that I did not have to pay back my own insurer after the other party's insurer paid me. The law office has now closed down. What can I do? What should I do to prevent similar problem in the future?



**<u>Answer</u>:** You probably will not be successful in any attempt to completely avoid reimbursing Mercury. Most insurance policies in California have a subrogation clause which requires that their insureds reimburse them for the medical payments which it made to the medical provider(s) IF the insureds recover from the third-party tortfeasor(s)(or their insurer(s)). In your case, you recovered from the other party's insurer. If you had a California Mercury policy, you would be required to reimburse Mercury for the medical payment which it made on your behalf. If you had a licensed lawyer, most insurers would have allowed at least 1/3 reduction if they were reimbursed timely. However, Mercury may not be as willing to do so because it had to sue you to enforce its subrogation clause. If you properly explain your case to Mercury, it may allow the reduction anyway. To prevent future problem, you should make sure that you retain the services of a licensed lawyer. In certain cases, subrogation may be a complicated issue. In many cases, you will need to read the insurance policy(ies) and/or check the laws of different state(s) if more than one policy or state are at issue. PIP, Medi-Cal, Medicare and ERISA payments are also handled differently.



**<u>Question #2</u>:** I've heard on CNN that the US Senate held a hearing on amnesty for undocumented aliens. What is amnesty?



**<u>Answer #2</u>:** For immigration purposes, amnesty occurs when the President signed into law a bill drafted by Congress to grant a permanent resident status to people who entered the US without inspection or overstayed their visas, and who can document that they have lived in the US for a period of time. In the past, these periods generally ranges from 10 years to 20 years. Unlike the past amnesty bills which would immediately grant permanent resident status to those who qualified, the bill which was debated in the Senate before the two-week spring recess, would do so only after the applicants who have been in the US for a shorter period of time (5-10 years), meet certain conditions and remain in the US another longer period of time. The Senate will return on April 24, 2006, to further debate the bill. As of today (April 7, 2006), no amnesty bill was submitted to President Bush to sign into law.

*This article is very general and does not attempt to give any reader a legal advice nor establish any attorney-client relationship. For a legal advice, a reader should consult an attorney with a specific question.



**<u>ຄຳຖາມ # 1</u>:** ປະກັນພັຍຂ້ອຍ **Mercury** ຟ້ອງຂ້ອຍ ເພື່ອຈະເອົາເງີນ ຄ່າໝໍ ຊຶ່ງເຂົາຈ່າຍໃຫ້ໝໍ ຮັກສາຂ້ອຍ ກ່ຽວກັບ ການບາດເຈັບ ເນື່ອງມາຈາກ ອຸບປະຕິເຫດຣົຖ ທີ່ຣັຖ **California** ເມື່ອ 2 ປີທີ່ຜ່ານມາ. ຄົນລາວ ທີ່ຕົວະ ຂ້ອຍ ວ່າ ລາວ ເປັນ ຫົວໜ້າ ຫ້ອງການ ທະນາຍຄວາມ ໄດ້ບອກຂ້ອຍວ່າ ບໍ່ຕ້ອງຈ່າຍ ປະກັນພັຍ ຂ້ອຍຄືນ ຫລັງຈາກ ປະກັນພັຍ ຝ່າຍ ກົງກັນຂ້າມ ຈ່າຍເງີນໃຫ້ຂ້ອຍ. ຫ້ອງການ ທະນາຍຄວາມ ນັ້ນ ກໍໄດ້ປິດ ຕົວ ລົງ ໄປ ແລ້ວ. ຂ້ອຍ ຈະຕ້ອງ ເຮັດຈັ່ງໃດ? ເພື່ອ ກັນບັນຫາ ຄື ໃນ ອານາຄົດ ຂ້ອຍຕ້ອງ ເຮັດ ຈັ່ງໃດ?



**<u>ຄຳຕອບ #1</u>**: ທ່ານຄົງຈະບໍ່ສາມາດ ຫລີກລ່ຽງ ບໍ່ຈ່າຍ Mercury ເລີຍ. ສັນຍາປະກັນພັຍ ສ່ວນໃຫຍ່ ໃນຣັຖ California ມີຂໍ້ບັນຈຸ ໃຫ້ຜູ້ຖືກປະກັນພັຍ ຈ່າຍຄ່າໝໍ ທີ່ປະກັນພັຍຈ່າຍ ໃຫ້ໝໍຄືນ <u>ຖ້າ</u>ວ່າ ຜູ້ຖືກປະກັນ ໄດ້ຮັບ ຄ່າຊົດເຊີຍ (ເງີນ) ຈາກຜູ້ທີ່ສາມ (ຫລືປະກັນຂອງລາວ). ໃນກໍຣະນີທ່ານ, ທ່ານໄດ້ເງີນ ຈາກປະກັນພັຍ ຝ່າຍ ກົງກັນຂ້າມ. ຖ້າທ່ານມີ ສັນຍາ ປະກັນພັຍ ຂອງ Mercury ທີ່ California ທ່ານຕ້ອງຈ່າຍ Mercury ຄືນ. ຖ້າວ່າທ່ານມີ ທະນາຍແທ້ ດຳເນີນ ຄະດີ ໃຫ້ທ່ານ ປະກັນພັຍ ສ່ວນໃຫຍ່ ຈະອະນຸຍາດ ໃຫ້ທ່ານ ຈ່າຍຄືນພຽງແຕ່ 2/3 ຂອງ ຄ່າໝໍ ທີ່ປະກັນພັຍ ຈ່າຍໄປໃຫ້ທ່ານ. ແຕ່ໃນກໍຣະນີນີ້ Mercury ຕ້ອງ ເສັຽເວລາ ແລະ ເງີນ ຟ້ອງ ທ່ານຂຶ້ນສານ ເພາະສະນັ້ນ ເຂົາອາດ ຈະບໍ່ຍອມລຸດຜ່ອນໃຫ້ທ່ານເລີຍ. ເພື່ອກັນບັນຫາ ຄືກັນ ໃນອານາຄົດ ທ່ານ ຄວນຈະ ໄຊ້ ການບໍຣິການ ຈາກທະນາຍຄວາມແທ້. ຂໍ້ສັນຍາ ປະກັນພັຍ Subrogation ໃນບາງຄະດີ ອາດຈະຊັບຊ້ອນຫລາຍ ກວ່າທີ່ທ່ານຄິດ ໂດຍສະເພາະ ຄະດີໃຫຍ່ໆ. ທ່ານ ຫລື ທະນາຍທ່ານ ອາດຈະຕ້ອງ ອ່ານ ສັນຍາປະກັນພັຍ ແລະ/ ຫລື ກວດກົດໝາຍຣັຖອື່ນ ຖ້າວ່າ ມີປະກັນພັຍ ຫລາຍສັນຍາ ຫລື ຫລາຍຣັຖ ມາກ່ຽວຂ້ອງ. ການຈ່າຍ PIP,Medi-Cal. Medicare ແລະ ERISA ຈະມີກົດໝາຍບັນຍັດທີ່ແຕກຕ່າງກັນ.



**<u>ຄຳຖາມ # 2</u> :** ຂ້າພະເຈົ້າ ໄດ້ຍິນ ຈາກ CNN ວ່າ ສະພາສູງ ສະຫະຣັຖ ໄດ້ສົນທະນາ ຮັບຟັງ amnesty ສຳຫລັບຄົນ ທີ່ຢູ່ໂດຍບໍ່ມີອະນຸຍາດ. Amnesty ແມ່ນຫຍັງກັນ?



**<u>ຄຳຕອບ #2</u> :** ສຳຫລັບການເຂົ້າເມືອງ ອະເມຣິກັນ, amnesty ເກີດຂຶ້ນເວລາທີ່ ປະທານາທິບໍດີ ເຊັນຂໍ້ສເນີ ກົດໝາຍ (bill) ຈາກສະພາ ໃຫ້ເປັນກົດໝາຍ ເພື່ອໃຫ້ສິດທິ ຢູ່ຖາວອນ ໃນອະເມຣິກາ (ໃບຂຽວ) ກັບຄົນ ທີ່ເຂົ້າ ປະເທດ ອະເມຣິກາ ໂດ ຍບໍ່ ຜ່ານດ່ານ ຫລືຢູ່ເກີນ ກຳນົດ ວີຊ່າ ຖ້າວ່າເຂົາເຈົ້າ ມີ ຫລັກຖານ ວ່າ ໄດ້ ຢູ່ ປະເທດ ອະເມຣິກາ ຜ່ານມາ ຍາວນານ. ໃນອະດີດ ເວລາ ນີ້ສ່ວນຫລາຍ ຈະເລີ້ມແຕ່ 10 ປີ ໄປເຖີງ 20 ປີ. ຄົນທີ່ຢູ່ດົນນານ ເກີງກຳນົດ ກໍຈະໄດ້ໃບຂຽວ ໃນທັນທີ. ແຕ່ວ່າ ຂໍ້ສເນີ ກົດໝາຍຊຶ່ງສະພາສູງ ໄດ້ທຳການໂຕ້ຖຽງກັນກ່ອນ ຈະຢຸດພັກ ຣະດູ ຕົ້ນໄມ້ປົ່ງ 2 ອາທິດ ຈະບໍ່ໃຫ້ໃບຂຽວ ທັນທີ ແຕ່ຈະອະນຸຍາດ ໃຫ້ຄົນ ທີ່ມາຢູ່ຣະຍະສັ້ນກວ່າ (5 ເຖີງ 10 ປີ) ຍື່ນຂໍໃບຂຽວທັນທີ <u>ແຕ່</u> ຈະ ໄດ້ ໃບຂຽວ ຫລັງຈາກ ເຮັດຕາມ ຂໍ້ບັດຍັດ ບາງຢ່າງ ແລະ ຕ້ອງ ຢູ່ໃນ ອະເມຣິກາຕໍ່ ດົນກວ່ານັ້ນອີກ ໂດຍ ບໍ່ ເຮັດ ຜິດ ກົດໝາຍ ໜັກ. ສະພາສູງຈະກັບຄືນວັນທີ່ 24 ເມສາ 2006 ເພື່ອ ໂຕ້ຖຽງ ກັນຕໍ່. ຈົນເຖີງ ມື້ນີ້ (ວັນທີ່ 7 ເມສາ 2006) ຍັງ ບໍ່ ມີ ຂໍ້ສເນີ ກົດໝາຍ amnesty ຖືກ ຍື່ນ ໄປໃຫ້ ປະທານາທິບໍດີ Bush ເຊັນ.